**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ 644 /ລບ
ນະຄອນຫຼວງວຽງຈັນ, ລົງວັນທີ 25 / 11 / 24

# ດຳລັດ
# ວ່າດ້ວຍການເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ ສະບັບເລກທີ 41/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 4658/ກປ, ລົງວັນທີ 17 ພະຈິກ 2023.

**ລັດຖະບານ ອອກດຳລັດ:**

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ເພື່ອໃຫ້ ວຽກງານດັ່ງກ່າວ ດຳເນີນໄປຢ່າງມີປະສິດທິພາບ ແນ່ໃສ່ ປ້ອງກັນ, ສະກັດກັ້ນການລະບາດຂອງພະຍາດ ສັດ ແລະ ສັດນ້ຳ, ເຮັດໃຫ້ຊີວິດ ແລະ ສຸຂະພາບຂອງ ຄົນ, ສັດ, ສັດນ້ຳ ແລະ ສິ່ງແວດລ້ອມ ມີຄວາມປອດໄພ ປະກອບສ່ວນ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ການເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ**

ການເຄື່ອນຍ້າຍ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ແມ່ນ ທຸກການ ຂົນສົ່ງ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຈາກ ເຂດໜຶ່ງໄປຫາເຂດອື່ນ ຢູ່ ພາຍໃນປະເທດ.

ການນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ແມ່ນ ການນຳເອົາ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ເຂົ້າ ອອກ ດິນແດນຂອງ ສປປ ລາວ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສັດ** ໝາຍເຖິງ ສັດລ້ຽງລູກດ້ວຍນ້ຳນົມ, ສັດປີກ, ເຜິ້ງ ແລະ ສັດອື່ນທີ່ໄດ້ລ້ຽງ;

2. **ສັດນ້ຳ** ໝາຍເຖິງ ສັດທຸກຊະນິດທີ່ເກີດ ແລະ ຂະຫຍາຍຕົວຢູ່ໃນນ້ຳ ຫຼື ມີວົງຈອນຊີວິດ ໄລຍະໃດໜຶ່ງຢູ່ໃນນ້ຳ ຕາມທຳມະຊາດ ຫຼື ນຳເອົາຈາກທຳມະຊາດມາລ້ຽງ ແລະ ຂະຫຍາຍພັນ ລວມທັງ ໄຂ່, ນ້ຳເຊື້ອ, ໂຕອ່ອນຂອງສັດນ້ຳ;

3. **ຜະລິດຕະພັນ ສັດ, ສັດນ້ຳ** ໝາຍເຖິງ ຜົນຜະລິດທີ່ໄດ້ຈາກ ສັດ, ສັດນ້ຳ ເປັນຕົ້ນ ຊາກສັດໝົດໂຕ, ຊາກສັດຜ່າເຄິ່ງ, ຊີ້ນ, ນົມ, ໄຂ່, ໜັງ, ເຂົາ, ກະດູກ, ເລືອດ, ເຄື່ອງໃນ, ຂົນ, ເລັບ, ໄຂມັນ, ນ້ຳເຊື້ອ, ໂຕອ່ອນ, ຈຸລັງໄຂ່, ນ້ຳມັນປາ, ປາປົ່ນ;

4. **ການນຳເຂົ້າ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ** ໝາຍເຖິງ ການນຳເອົາ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ເຂົ້າມາ ລ້ຽງ, ຂະຫຍາຍພັນ ແລະ ນຳໃຊ້ ໃນ ສປປ ລາວ;

5. **ການສົ່ງອອກ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ** ໝາຍເຖິງ ການນຳເອົາ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ອອກໄປຕ່າງປະເທດ;

6. **ການສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ** ໝາຍເຖິງ ການນຳເອົາ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ສົ່ງຜ່ານ ດິນແດນຂອງ ສປປ ລາວ ໄປປະເທດອື່ນ;

7. **ສັດຕະວະແພດ** ໝາຍເຖິງ ບຸກຄົນທີ່ໄດ້ຮັບປະກາສະນີຍະບັດ ວິຊາສະເພາະດ້ານສັດຕະວະແພດ ລະດັບປະລິນຍາຕີຂຶ້ນໄປ ທີ່ກະຊວງສຶກສາທິການ ແລະ ກິລາ ຮັບຮອງ;

8. **ເຊື້ອພະຍາດ** ໝາຍເຖິງ ຈຸລິນຊີ, ແມ່ກາຝາກ ແລະ ເຊື້ອລາໃດໜຶ່ງ ທີ່ເປັນສາເຫດ ຫຼື ເປັນໂຕປະກອບເຮັດໃຫ້ເກີດພະຍາດ;

9. **ພະຍາດສັດ, ສັດນ້ຳ ທີ່ຈຳເປັນຕ້ອງແຈ້ງ** ໝາຍເຖິງ ພະຍາດສັດ, ສັດນ້ຳ ຮ້າຍແຮງ ທີ່ສາມາດຕິດຕໍ່ຈາກສັດ, ສັດນ້ຳ ສູ່ ສັດ, ສັດນ້ຳ ຫຼື ຈາກສັດ, ສັດນ້ຳ ສູ່ຄົນ ຊຶ່ງມີການແຜ່ລາມໄວ, ສ້າງຜົນກະທົບທາງລົບຕໍ່ສຸຂະພາບ, ຊີວິດ ຂອງ ສັດ ແລະ ຄົນ, ສິ່ງແວດລ້ອມ, ເສດຖະກິດ ແລະ ສັງຄົມ;

10. **ການປະເມີນຄວາມສ່ຽງ** ໝາຍເຖິງ ການປະເມີນຜົນຄວາມເປັນໄປໄດ້ ຂອງການເຂົ້າ, ອອກ, ກໍ່ຕົວ ແລະ ແຜ່ກະຈາຍຂອງສິ່ງເປັນອັນຕະລາຍ ທີ່ຈະສົ່ງຜົນກະທົບທາງລົບຕໍ່ ສຸຂະພາບ, ຊີວິດ ຂອງ ສັດ ແລະ ຄົນ, ສິ່ງແວດລ້ອມ, ເສດຖະກິດ ແລະ ສັງຄົມ ຢູ່ປະເທດທີ່ນຳເຂົ້າ;

11. **ດ່ານກວດກາສັດຕະວະແພດ** ໝາຍເຖິງ ຈຸດກວດກາດ້ານສັດຕະວະແພດ ຢູ່ ດ່ານ, ສະຖານທີ່ກັກກັນສັດ, ສະໜາມບິນ, ທ່າເຮືອ, ສະຖານີລົດໄຟ, ໄປສະນີ ຫຼື ຈຸດໃດໜຶ່ງ ທີ່ກຳນົດຢູ່ ພາຍໃນ ຫຼື ຊາຍແດນລະຫວ່າງປະເທດ ໂດຍມີເຈົ້າໜ້າທີ່ສັດຕະວະແພດທີ່ໄດ້ຮັບການມອບໝາຍປະຈຳຢູ່ດ່ານ;

12. **ດ່ານ** ໝາຍເຖິງ ດ່ານຊາຍແດນ, ດ່ານສະໜາມບິນ ຫຼື ດ່ານອື່ນ;

13. **ຜູ້ຂົນສົ່ງ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ໃດໜຶ່ງ ທີ່ເປັນເຈົ້າຂອງ ຫຼື ຜູ້ທີ່ເຈົ້າຂອງມອບໝາຍ ໃຫ້ເຄື່ອນຍ້າຍ ຫຼື ຂົນສົ່ງ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ;

14. **ເຂດປອດພະຍາດສັດ, ສັດນ້ຳ** ໝາຍເຖິງ ເຂດໃດໜຶ່ງທີ່ໄດ້ຮັບການຢັ້ງຢືນເປັນເຂດບໍ່ມີເຊື້ອພະຍາດໃດໜຶ່ງ ພ້ອມທັງມີການຈັດການ ແລະ ຄຸ້ມຄອງການເຄື່ອນຍ້າຍ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ເຂົ້າ, ອອກ ແລະ ຜ່ານ ເຂດດັ່ງກ່າວ ຢ່າງເປັນລະບົບ ແລະ ມີປະສິດທິພາບ;

15. **ເຈົ້າຂອງ** ໝາຍເຖິງ ຜູ້ເປັນເຈົ້າກຳມະສິດ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ;

16. **ສະຖານທີ່ກັກກັນສັດ** ໝາຍເຖິງ ຄອກສັດ ຫຼື ບໍລິເວນໃດໜຶ່ງ ທີ່ມີສິ່ງອຳນວຍຄວາມສະດວກສຳລັບລ້ຽງສັດ ຢ່າງຄົບຖ້ວນ ທີ່ສ້າງຂຶ້ນໃຫ້ເປັນບ່ອນແຍກສັດອອກໄວ້ຕ່າງຫາກ ໂດຍບໍ່ໃຫ້ມີການພົວພັນກັບສັດອື່ນເພື່ອໃຫ້ເຈົ້າໜ້າທີ່ສັດຕະວະແພດ ດຳເນີນການຕິດຕາມ ກວດກາສຸຂະພາບສັດ ແລະ ເຝົ້າລະວັງພະຍາດ ໃນໄລຍະເວລາທີ່ແນ່ນອນໃດໜຶ່ງ ກ່ອນນຳເອົາສັດໄປລ້ຽງ ຫຼື ຂ້າເພື່ອບໍລິໂພກ.

**ມາດຕາ 4 ຫຼັກການກ່ຽວກັບວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ**

ການຄຸ້ມຄອງວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງ ກັບ ນະໂຍບາຍ, ກົດໝາຍ, ລະບຽບການ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;
2. ຮັບປະກັນຄຸນນະພາບ ແລະ ຄວາມປອດໄພ ຕໍ່ສຸຂະພາບສັດ ແລະ ຜູ້ບໍລິໂພກ;
3. ປະຕິບັດ ຢ່າງເປັນເອກະພາບ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດກາໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກ່ຽວກັບວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຢູ່ ສປປ ລາວ.

ດຳລັດສະບັບນີ້ ບໍ່ນຳໃຊ້ສຳລັບການເຄື່ອນຍ້າຍສັດປ່າ ແລະ ຜະລິດຕະພັນສັດປ່າ.

## ພາກທີ II
## ການເຄື່ອນຍ້າຍ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ

### ໝວດທີ 1
### ການເຄື່ອນຍ້າຍສັດ ແລະ ສັດນ້ຳ

**ມາດຕາ 6 ການເຄື່ອນຍ້າຍສັດ ແລະ ສັດນ້ຳ**

ການເຄື່ອນຍ້າຍ ສັດ ທີ່ຕ້ອງຂໍອະນຸຍາດ ແມ່ນ ການເຄື່ອນຍ້າຍສັດລ້ຽງ ທີ່ມີລັກສະນະເປັນທຸລະກິດ, ມີຄວາມສ່ຽງຈະເກີດຜົນກະທົບທາງລົບຕໍ່ ການລ້ຽງສັດ, ເສດຖະກິດ ແລະ ສັງຄົມ ຕາມການກຳນົດຂອງກະຊວງກະສິກຳ ແລະ ປ່າໄມ້.

ການເຄື່ອນຍ້າຍ ສັດນ້ຳ ທີ່ຕ້ອງຂໍອະນຸຍາດ ແມ່ນ ການເຄື່ອນຍ້າຍສັດນ້ຳບັນຊີ I ແລະ ສັດນ້ຳບັນຊີ II ເປັນຕົ້ນ ປາຂ່າ, ປາຕົບ, ປາບຶກ, ປາໄຫຼໄຟຟ້າ, ປາຝາໄລ.

ການເຄື່ອນຍ້າຍ ສັດນ້ຳບັນຊີ III ບໍ່ຈຳເປັນຕ້ອງຂໍອະນຸຍາດເຄື່ອນຍ້າຍ.

**ມາດຕາ 7 ການຂໍອະນຸຍາດເຄື່ອນຍ້າຍສັດ ແລະ ສັດນ້ຳ ລະຫວ່າງ ເມືອງຕໍ່ເມືອງ**

ຜູ້ທີ່ມີຈຸດປະສົງ ເຄື່ອນຍ້າຍ ສັດ ຫຼື ສັດນ້ຳ ບັນຊີ I ແລະ ບັນຊີ II ຈາກເມືອງໜຶ່ງ ໄປຫາ ເມືອງອື່ນ ພາຍໃນແຂວງ, ນະຄອນຫຼວງ ຕ້ອງຍື່ນຄຳຮ້ອງຕາມແບບພິມ ພ້ອມດ້ວຍໃບຢັ້ງຢືນສຸຂະພາບສັດ, ສັດນ້ຳ ແລະ ໃບຢັ້ງຢືນຖິ່ນກຳເນີດ ຫຼື ແຫຼ່ງທີ່ມາ ຕໍ່ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ຂອງເມືອງຕົ້ນທາງ.

ພາຍຫຼັງໄດ້ຮັບເອກະສານປະກອບ ຄົບຖ້ວນແລ້ວ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ຕ້ອງພິຈາລະນາ ອອກໃບອະນຸຍາດເຄື່ອນຍ້າຍ ສັດ ຫຼື ສັດນ້ຳ ພາຍໃນ ສອງວັນ ລັດຖະການ.

ໃນກໍລະນີສົງໄສ ຫຼື ມີຄວາມສ່ຽງ ຕ້ອງລົງກວດກາສັດ ຫຼື ສັດນ້ຳ ຕົວຈິງ ແລະ ເກັບຕົວຢ່າງ ເພື່ອສົ່ງເຂົ້າຫ້ອງວິໄຈ.

ໃນກໍລະນີທີ່ບໍ່ສາມາດອອກໃບອະນຸຍາດເຄື່ອນຍ້າຍ ສັດ ຫຼື ສັດນ້ຳ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍ ຢ່າງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

**ມາດຕາ 8 ການຂໍອະນຸຍາດເຄື່ອນຍ້າຍ ສັດ ແລະ ສັດນໍ້າ ລະຫວ່າງ ແຂວງຕໍ່ແຂວງ**

ຜູ້ທີ່ມີຈຸດປະສົງ ເຄື່ອນຍ້າຍ ສັດ ຫຼື ສັດນໍ້າ ບັນຊີ I ແລະ ບັນຊີ II ຈາກແຂວງໜຶ່ງ ໄປຫາ ແຂວງອື່ນ ຕ້ອງຍື່ນຄໍາຮ້ອງຕາມແບບພິມ ພ້ອມດ້ວຍໃບຢັ້ງຢືນສຸຂະພາບ ສັດ, ສັດນໍ້າ ແລະ ໃບຢັ້ງຢືນຖິ່ນກໍາເນີດ ຫຼື ແຫຼ່ງທີ່ມາ ຕໍ່ ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ຂອງແຂວງຕົ້ນທາງ.

ພາຍຫຼັງໄດ້ຮັບເອກະສານປະກອບ ຄົບຖ້ວນແລ້ວ ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ຕ້ອງພິຈາລະນາ ອອກໃບອະນຸຍາດເຄື່ອນຍ້າຍສັດ ຫຼື ສັດນໍ້າ ພາຍໃນ ສອງວັນ ລັດຖະການ.

ໃນກໍລະນີສົງໄສ ຫຼື ມີຄວາມສ່ຽງ ຕ້ອງລົງກວດກາສັດ ຫຼື ສັດນໍ້າ ຕົວຈິງ ແລະ ເກັບຕົວຢ່າງ ເພື່ອສົ່ງເຂົ້າ ຫ້ອງວິໄຈ.

ໃນກໍລະນີທີ່ບໍ່ສາມາດອອກໃບອະນຸຍາດເຄື່ອນຍ້າຍ ສັດ ຫຼື ສັດນໍ້າ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍ ຢ່າງເປັນລາຍ ລັກອັກສອນ ພ້ອມດ້ວຍເຫດຜົນ.

**ມາດຕາ 9 ໃບອະນຸຍາດເຄື່ອນຍ້າຍ ສັດ ຫຼື ສັດນໍ້າ**

ໃບອະນຸຍາດເຄື່ອນຍ້າຍ ສັດ ຫຼື ສັດນໍ້າ ແມ່ນ ເອກະສານຮັບຮອງ ໃນການອະນຸຍາດໃຫ້ດໍາເນີນການ ເຄື່ອນຍ້າຍ ສັດ ຫຼື ສັດນໍ້າ ໃດໜຶ່ງ ຈາກຂະແໜງການກະສິກໍາ ແລະ ປ່າໄມ້ ແລະ ສາມາດນໍາໃຊ້ໄດ້ພຽງຄັ້ງດຽວ.

ໃບອະນຸຍາດເຄື່ອນຍ້າຍ ສັດ ຫຼື ສັດນໍ້າ ແຕ່ລະຊະນິດ ມີເນື້ອໃນ ແລະ ອາຍຸການນໍາໃຊ້ ຕາມການກໍານົດ ຂອງກະຊວງກະສິກໍາ ແລະ ປ່າໄມ້.

**ມາດຕາ 10 ການເຄື່ອນຍ້າຍ ສັດ, ສັດນໍ້າ ເຂົ້າ, ອອກ ແລະ ຜ່ານ ເຂດປອດພະຍາດສັດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ຈະເຄື່ອນຍ້າຍ ສັດ, ສັດນໍ້າ ເຂົ້າ, ອອກ ແລະ ຜ່ານ ເຂດປອດພະຍາດສັດ ຍັງຕ້ອງປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 11 ການເຄື່ອນຍ້າຍ ສັດ, ສັດນໍ້າ ເຂົ້າ, ອອກ ແລະ ຜ່ານ ເຂດລະບາດພະຍາດສັດ**

ສັດ, ສັດນໍ້າ ທີ່ຕິດ ຫຼື ສົງໄສວ່າຕິດເຊື້ອພະຍາດສັດທີ່ຈໍາເປັນຕ້ອງແຈ້ງ ຢູ່ໃນເຂດທີ່ປະກາດເປັນເຂດ ລະບາດພະຍາດສັດ ບໍ່ອະນຸຍາດໃຫ້ເຄື່ອນຍ້າຍເດັດຂາດ, ສ່ວນ ສັດ, ສັດນໍ້າ ປະເພດອື່ນທີ່ຕ້ອງການເຄື່ອນຍ້າຍ ເຂົ້າ, ອອກ ແລະ ຜ່ານ ເຂດລະບາດພະຍາດດັ່ງກ່າວ ຕ້ອງຂໍອະນຸຍາດນໍາ ຂະແໜງການກະສິກໍາ ແລະ ປ່າໄມ້ ບ່ອນທີ່ ເປັນເຂດລະບາດ ບົນພື້ນຖານການປະສານສົມທົບກັບ ຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດສັດ ແລະ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

ສໍາລັບການຂໍອະນຸຍາດ ໃຫ້ປະຕິບັດຕາມ ມາດຕາ 7 ແລະ ມາດຕາ 8 ຂອງດໍາລັດສະບັບນີ້ ແລະ ຕ້ອງ ແຈ້ງຕໍ່ຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດສັດ.

**ມາດຕາ 12 ມາດຕະການຄວບຄຸມການຂົນສົ່ງ ສັດ ແລະ ສັດນໍ້າ**

ຜູ້ຂົນສົ່ງ ຕ້ອງປະຕິບັດ ຕາມມາດຕະການຄວບຄຸມການຂົນສົ່ງ ດັ່ງນີ້:

1. ແຈ້ງວັນ ແລະ ເວລາ ການເຄື່ອນຍ້າຍ ສັດ ແລະ ສັດນໍ້າ ໃຫ້ຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ ຂອງເມືອງຕົ້ນທາງຊາບ;

2. ນໍາໃຊ້ຍານພາຫະນະຂົນສົ່ງ ທີ່ເໝາະສົມ, ສາມາດທົນຕໍ່ການຮັບນໍ້າໜັກ ແລະ ຈໍານວນ ຂອງສັດ ແລະ ສັດນໍ້າ;

3. ຕ້ອງໄປຕາມເສັ້ນທາງ ທີ່ໄດ້ກໍານົດໄວ້ໃນໃບອະນຸຍາດ. ໃນກໍລະນີທີ່ມີຄວາມຈໍາເປັນ ທີ່ຕ້ອງໄດ້ ຂົນສົ່ງສັດ ຫຼື ສັດນໍ້າ ໄປເສັ້ນທາງອື່ນ ຜູ້ຂົນສົ່ງ ຕ້ອງແຈ້ງໃຫ້ຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ ຂອງເມືອງ ຕົ້ນທາງຮັບຮູ້ໂດຍດ່ວນ ເພື່ອໃຫ້ປະສານໄປຫາ ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ຫຼື ຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ ຂອງເມືອງທີ່ເປັນທາງຜ່ານ ແລະ ເມືອງປາຍທາງ ຊາບ;

4. ຮັບປະກັນ ບໍ່ໃຫ້ສິ່ງເສດເຫຼືອ ຮົ່ວໄຫຼ ຫຼື ຕົກເຮ່ຍຈາກຍານພາຫະນະຂົນສົ່ງໃສ່ເສັ້ນທາງ ແລະ ດຳເນີນການກຳຈັດສິ່ງເສດເຫຼືອ ໃຫ້ຖືກຕ້ອງຕາມຫຼັກວິຊາການ;

5. ຮັບປະກັນບໍ່ເອົາ ສັດ, ສັດນ້ຳ ລົງຈາກຍານພາຫະນະຢ່າງເດັດຂາດ. ໃນກໍລະນີສຸກເສີນ ທີ່ມີຄວາມຈຳເປັນຕ້ອງໄດ້ເອົາ ສັດ ຫຼື ສັດນ້ຳ ລົງຈາກຍານພາຫະນະ ຫຼື ຄ່ຽນຖ່າຍ ຕ້ອງແຈ້ງໃຫ້ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ທີ່ເກີດເຫດສຸກເສີນຊາບ ເພື່ອມາດຳເນີນການກວດກາ ແລະ ຕິດຕາມຢ່າງໃກ້ຊິດ;

6. ມີເອກະສານ ທີ່ຖືກຕ້ອງ ແລະ ຄົບຖ້ວນ ໄປຕະຫຼອດການຂົນສົ່ງ ແລະ ໃຫ້ຄວາມຮ່ວມມືໃນກໍລະນີທີ່ມີການກວດກາຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

7. ອະນາໄມຂ້າເຊື້ອຍານພາຫະນະ, ຖັງ ຫຼື ອຸປະກອນສຳລັບການຂົນສົ່ງທັງກ່ອນ ແລະ ຫຼັງການຂົນສົ່ງທຸກຄັ້ງ. ການນຳໃຊ້ຢາ ຫຼື ສານເຄມີ ເຂົ້າໃນການປ້ອງກັນ ແລະ ຂ້າເຊື້ອພະຍາດ ຕ້ອງນຳໃຊ້ຊະນິດທີ່ເໝາະສົມ, ປອດໄພ ຕໍ່ຜູ້ໃຊ້, ຍານພາຫະນະ ແລະ ຕ້ອງປະຕິບັດຕາມຄຳແນະນຳຂອງຜູ້ຜະລິດ;

8. ຕ້ອງບັນຈຸສັດນ້ຳໃສ່ ຖັງ ຫຼື ຖົງຢາງທີ່ມີນ້ຳສະອາດ, ມີປະລິມານອົກຊີແຊນທີ່ພຽງພໍ ແລະ ອັດຕາການບັນຈຸ ສັດນ້ຳ ຕ້ອງເໝາະສົມຕາມຄຳແນະນຳ ຂອງກະຊວງກະສິກຳ ແລະ ປ່າໄມ້. ນ້ຳທີ່ເຫຼືອຈາກການຂົນສົ່ງສັດນ້ຳ ກ່ອນປ່ອຍລົງສູ່ແຫຼ່ງນ້ຳທຳມະຊາດ ຫຼື ສະຖານທີ່ອື່ນຕ້ອງບຳບັດຕາມວິທີການທີ່ກົມລ້ຽງສັດ ແລະ ການປະມົງ ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ.

ໃນກໍລະນີຂົນສົ່ງ ສັດ ແລະ ສັດນ້ຳ ທາງອາກາດ ໃຫ້ປະຕິບັດຕາມລະບຽບການສະເພາະ ກ່ຽວກັບການຂົນສົ່ງ ສັດ, ສັດນ້ຳ ທີ່ມີຊີວິດ ຂອງສະມາຄົມຂົນສົ່ງທາງອາກາດສາກົນ.

**ມາດຕາ 13 ການກວດກາຫຼັງການເຄື່ອນຍ້າຍສັດ ຫຼື ສັດນ້ຳ**

ເມື່ອສັດ ຫຼື ສັດນ້ຳ ຖືກເຄື່ອນຍ້າຍເຖິງປາຍທາງແລ້ວ ຜູ້ເຄື່ອນຍ້າຍ ສັດ ຫຼື ສັດນ້ຳ ຕ້ອງແຈ້ງໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ຂອງເມືອງປາຍທາງ ເພື່ອກວດກາ ແລະ ເກັບໃບອະນຸຍາດເຄື່ອນຍ້າຍຄືນພາຍຫຼັງສຳເລັດການເຄື່ອນຍ້າຍ.

ໃນກໍລະນີ ທີ່ພົບເຫັນສັດ ຫຼື ສັດນ້ຳ ໄດ້ຮັບບາດເຈັບ ຫຼື ມີອາການຜິດປົກກະຕິ ຕ້ອງແນະນຳໃຫ້ເຈົ້າຂອງສັດ ຫຼື ສັດນ້ຳ ດຳເນີນມາດຕະການຕາມຫຼັກວິຊາການ ກ່ອນນຳໄປລ້ຽງ ຫຼື ຂ້າ ພ້ອມທັງເຮັດບົດບັນທຶກໄວ້.

**ມາດຕາ 14 ການໂຈະການເຄື່ອນຍ້າຍ ແລະ ການປ່ຽນເສັ້ນທາງເຄື່ອນຍ້າຍ**

ການເຄື່ອນຍ້າຍ ສັດ ຫຼື ສັດນ້ຳ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການລາຍງານການເກີດການລະບາດຂອງພະຍາດສັດ ຫຼື ສັດນ້ຳ ຢູ່ຕົ້ນທາງ ຫຼື ປາຍທາງກ່ອນການເຄື່ອນຍ້າຍ;
2. ສົງໄສວ່າ ມີການຕິດເຊື້ອພະຍາດສັດ ໃນເວລາກວດກາຢູ່ດ່ານກວດກາສັດຕະວະແພດ;
3. ເກີດການລະບາດພະຍາດສັດ ຕາມເສັ້ນທາງຂອງການເຄື່ອນຍ້າຍ.

ໃນກໍລະນີເກີດການລະບາດພະຍາດສັດ ຕາມເສັ້ນທາງຂອງການເຄື່ອນຍ້າຍ ສາມາດປ່ຽນເສັ້ນທາງໄດ້ຕາມການຕົກລົງຂອງເຈົ້າໜ້າທີ່ສັດຕະວະແພດ.

ສຳລັບຄ່າໃຊ້ຈ່າຍ ກ່ຽວກັບການໂຈະ ຫຼື ການປ່ຽນເສັ້ນທາງເຄື່ອນຍ້າຍ ເຈົ້າຂອງ ສັດ ຫຼື ສັດນ້ຳ ເປັນຜູ້ຮັບຜິດຊອບທັງໝົດ.

**ມາດຕາ 15 ການຍົກເລີກການເຄື່ອນຍ້າຍ ສັດ ຫຼື ສັດນ້ຳ**

ການເຄື່ອນຍ້າຍ ສັດ ຫຼື ສັດນ້ຳ ຈະຖືກຍົກເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການຢັ້ງຢືນ ຫຼື ປະກາດ ເປັນເຂດລະບາດພະຍາດສັດ, ສັດນ້ຳ ທີ່ຈຳເປັນຕ້ອງແຈ້ງ ຢູ່ຕົ້ນທາງ ຫຼື ປາຍທາງ;

2. ມີການຢັ້ງຢືນວ່າ ສັດ ຫຼື ສັດນ້ຳ ຕິດເຊື້ອພະຍາດສັດ, ສັດນ້ຳ ທີ່ຈຳເປັນຕ້ອງແຈ້ງ ໃນເວລາກວດກາຢູ່ດ່ານກວດກາສັດຕະວະແພດ;

3. ບໍ່ປະຕິບັດຕາມໃບອະນຸຍາດເຄື່ອນຍ້າຍ ສັດ ຫຼື ສັດນ້ຳ.

ສຳລັບຄ່າໃຊ້ຈ່າຍ ກ່ຽວກັບການຍົກເລີກການເຄື່ອນຍ້າຍ ເຈົ້າຂອງ ສັດ ຫຼື ສັດນ້ຳ ເປັນຜູ້ຮັບຜິດຊອບທັງໝົດ.

## ໝວດທີ 2
## ການເຄື່ອນຍ້າຍຜະລິດຕະພັນ ສັດ ແລະ ສັດນ້ຳ

### ມາດຕາ 16 ການເຄື່ອນຍ້າຍຜະລິດຕະພັນ ສັດ ແລະ ສັດນ້ຳ

ການເຄື່ອນຍ້າຍຜະລິດຕະພັນສັດ ທີ່ຕ້ອງຂໍອະນຸຍາດ ແມ່ນ ການເຄື່ອນຍ້າຍຜະລິດຕະພັນສັດລ້ຽງ ທີ່ມີລັກສະນະເປັນທຸລະກິດ, ມີຄວາມສ່ຽງຈະເກີດຜົນກະທົບທາງລົບຕໍ່ ການລ້ຽງສັດ, ເສດຖະກິດ ແລະ ສັງຄົມ.

ການເຄື່ອນຍ້າຍຜະລິດຕະພັນ ສັດນ້ຳ ທີ່ຕ້ອງຂໍອະນຸຍາດ ແມ່ນ ການເຄື່ອນຍ້າຍຜະລິດຕະພັນສັດນ້ຳບັນຊີ I ແລະ ສັດນ້ຳບັນຊີ II.

ການເຄື່ອນຍ້າຍຜະລິດຕະພັນ ສັດນ້ຳບັນຊີ III ບໍ່ຈຳເປັນຕ້ອງຂໍອະນຸຍາດເຄື່ອນຍ້າຍ.

### ມາດຕາ 17 ການຂໍອະນຸຍາດເຄື່ອນຍ້າຍຜະລິດຕະພັນ ສັດ ແລະ ສັດນ້ຳ ລະຫວ່າງ ເມືອງຕໍ່ເມືອງ

ຜູ້ທີ່ມີຈຸດປະສົງ ເຄື່ອນຍ້າຍຜະລິດຕະພັນ ສັດ ຫຼື ສັດນ້ຳ ບັນຊີ I ແລະ ບັນຊີ II ຈາກເມືອງໜຶ່ງ ໄປຫາເມືອງອື່ນ ພາຍໃນແຂວງ, ນະຄອນຫຼວງ ຕ້ອງຍື່ນຄຳຮ້ອງຕາມແບບພິມ ພ້ອມດ້ວຍໃບຢັ້ງຢືນສຸຂານາໄມຜະລິດຕະພັນ ສັດ ຫຼື ສັດນ້ຳ ແລະ ໃບຢັ້ງຢືນແຫຼ່ງທີ່ມາ ຕໍ່ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ຂອງເມືອງຕົ້ນທາງ.

ພາຍຫຼັງໄດ້ຮັບເອກະສານປະກອບ ຄົບຖ້ວນແລ້ວ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ຕ້ອງພິຈາລະນາອອກໃບອະນຸຍາດເຄື່ອນຍ້າຍຜະລິດຕະພັນ ສັດ ຫຼື ສັດນ້ຳ ພາຍໃນ ສອງວັນ ລັດຖະການ.

ໃນກໍລະນີສົງໄສ ຫຼື ມີຄວາມສ່ຽງ ຕ້ອງລົງກວດກາຜະລິດຕະພັນ ສັດ ຫຼື ສັດນ້ຳ ຕົວຈິງ ແລະ ເກັບຕົວຢ່າງເພື່ອສົ່ງເຂົ້າຫ້ອງວິໄຈ.

ໃນກໍລະນີທີ່ບໍ່ສາມາດອອກໃບອະນຸຍາດເຄື່ອນຍ້າຍຜະລິດຕະພັນ ສັດ ຫຼື ສັດນ້ຳ ຕ້ອງແຈ້ງຕອບຜູ້ຮ້ອງຂໍຊາບຢ່າງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

### ມາດຕາ 18 ການຂໍອະນຸຍາດເຄື່ອນຍ້າຍຜະລິດຕະພັນ ສັດ ແລະ ສັດນ້ຳ ລະຫວ່າງ ແຂວງຕໍ່ແຂວງ

ຜູ້ທີ່ມີຈຸດປະສົງ ເຄື່ອນຍ້າຍຜະລິດຕະພັນ ສັດ ຫຼື ສັດນ້ຳ ບັນຊີ I ແລະ ບັນຊີ II ຈາກແຂວງໜຶ່ງ ໄປຫາແຂວງອື່ນ ຕ້ອງຍື່ນຄຳຮ້ອງຕາມແບບພິມ ພ້ອມດ້ວຍໃບຢັ້ງຢືນສຸຂານາໄມຜະລິດຕະພັນ ສັດ ຫຼື ສັດນ້ຳ ແລະ ໃບຢັ້ງຢືນແຫຼ່ງທີ່ມາ ຕໍ່ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຂອງແຂວງຕົ້ນທາງ.

ພາຍຫຼັງໄດ້ຮັບເອກະສານປະກອບ ຄົບຖ້ວນແລ້ວ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຕ້ອງພິຈາລະນາ ອອກໃບອະນຸຍາດເຄື່ອນຍ້າຍຜະລິດຕະພັນ ສັດ ຫຼື ສັດນ້ຳ ພາຍໃນ ສອງວັນ ລັດຖະການ.

ໃນກໍລະນີສົງໄສ ຫຼື ມີຄວາມສ່ຽງ ຕ້ອງລົງກວດກາຜະລິດຕະພັນ ສັດ ຫຼື ສັດນ້ຳ ຕົວຈິງ ແລະ ເກັບຕົວຢ່າງເພື່ອສົ່ງເຂົ້າຫ້ອງວິໄຈ.

ໃນກໍລະນີທີ່ບໍ່ສາມາດອອກໃບອະນຸຍາດເຄື່ອນຍ້າຍຜະລິດຕະພັນ ສັດ ຫຼື ສັດນ້ຳ ຕ້ອງແຈ້ງຕອບຜູ້ຮ້ອງຂໍຊາບຢ່າງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

**ມາດຕາ 19 ໃບອະນຸຍາດເຄື່ອນຍ້າຍຜະລິດຕະພັນ ສັດ ແລະ ສັດນ້ຳ**

ໃບອະນຸຍາດເຄື່ອນຍ້າຍຜະລິດຕະພັນ ສັດ ແລະ ສັດນ້ຳ ແມ່ນ ເອກະສານຮັບຮອງ ໃນການອະນຸຍາດໃຫ້ດຳເນີນການເຄື່ອນຍ້າຍຜະລິດຕະພັນ ສັດ ແລະ ສັດນ້ຳ ໃດໜຶ່ງ ຈາກຂະແໜງການກະສິກຳ ແລະ ປ່າໄມ້ ແລະ ສາມາດນຳໃຊ້ໄດ້ພຽງຄັ້ງດຽວ.

ໃບອະນຸຍາດເຄື່ອນຍ້າຍຜະລິດຕະພັນ ສັດ ແລະ ສັດນ້ຳ ແຕ່ລະຊະນິດ ມີເນື້ອໃນ ແລະ ອາຍຸການນຳໃຊ້ ຕາມການກຳນົດຂອງກະຊວງກະສິກຳ ແລະ ປ່າໄມ້.

**ມາດຕາ 20 ການເຄື່ອນຍ້າຍຜະລິດຕະພັນ ສັດ, ສັດນ້ຳ ເຂົ້າ, ອອກ ແລະ ຜ່ານ ເຂດປອດພະຍາດສັດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ຈະເຄື່ອນຍ້າຍຜະລິດຕະພັນ ສັດ, ສັດນ້ຳ ເຂົ້າ, ອອກ ແລະ ຜ່ານ ເຂດປອດພະຍາດສັດ ຕ້ອງປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດເຂດປອດພະຍາດສັດ.

**ມາດຕາ 21 ການເຄື່ອນຍ້າຍຜະລິດຕະພັນ ສັດ ຫຼື ສັດນ້ຳ ເຂົ້າ, ອອກ ແລະ ຜ່ານ ເຂດລະບາດພະຍາດສັດ**

ຜະລິດຕະພັນ ສັດ ຫຼື ສັດນ້ຳ ທີ່ຕິດ ຫຼື ສົງໄສວ່າຕິດເຊື້ອພະຍາດ ສັດ, ສັດນ້ຳ ທີ່ຈຳເປັນຕ້ອງແຈ້ງ ຢູ່ໃນເຂດທີ່ປະກາດເປັນເຂດລະບາດພະຍາດ ສັດ, ສັດນ້ຳ ບໍ່ອະນຸຍາດໃຫ້ເຄື່ອນຍ້າຍເດັດຂາດ, ສ່ວນຜະລິດຕະພັນ ສັດ ຫຼື ສັດນ້ຳ ປະເພດອື່ນທີ່ຕ້ອງການເຄື່ອນຍ້າຍ ເຂົ້າ, ອອກ ແລະ ຜ່ານ ເຂດລະບາດພະຍາດດັ່ງກ່າວ ຕ້ອງຂໍອະນຸຍາດນຳຂະແໜງການກະສິກຳ ແລະ ປ່າໄມ້ ບ່ອນທີ່ເປັນເຂດລະບາດ ບົນພື້ນຖານການປະສານສົມທົບກັບ ຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດ ແລະ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

ສຳລັບການຂໍອະນຸຍາດ ໃຫ້ປະຕິບັດຕາມ ມາດຕາ 17 ແລະ ມາດຕາ 18 ຂອງດຳລັດສະບັບນີ້ ແລະ ຕ້ອງແຈ້ງຕໍ່ຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດ.

**ມາດຕາ 22 ມາດຕະການຄວບຄຸມການຂົນສົ່ງຜະລິດຕະພັນ ສັດ ແລະ ສັດນ້ຳ**

ການຂົນສົ່ງຜະລິດຕະພັນ ສັດ ແລະ ສັດນ້ຳ ຕ້ອງປະຕິບັດ ຕາມມາດຕະການ ດັ່ງນີ້:

1. ແຈ້ງວັນ ແລະ ເວລາ ການເຄື່ອນຍ້າຍຜະລິດຕະພັນ ສັດ ແລະ ສັດນ້ຳ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ຂອງເມືອງຕົ້ນທາງຊາບ;

2. ນຳໃຊ້ຍານພາຫະນະທີ່ສາມາດຮັບປະກັນການຂົນສົ່ງ ບໍ່ໃຫ້ຜະລິດຕະພັນ ສັດ ແລະ ສັດນ້ຳ ສຳພັດກັບ ລົມ, ຝົນ, ແສງແດດ ຫຼື ຝຸ່ນລະອອງ, ພາຊະນະບັນຈຸ ຕ້ອງສະອາດ ແລະ ບໍ່ໃຫ້ວາງຜະລິດຕະພັນ ສັດ ແລະ ສັດນ້ຳ ສຳພັດກັບພື້ນ ຂອງຍານພາຫະນະໂດຍກົງ;

3. ຕ້ອງໄປຕາມເສັ້ນທາງ ທີ່ກຳນົດໄວ້ໃນໃບອະນຸຍາດ, ໃນກໍລະນີທີ່ມີຄວາມຈຳເປັນຕ້ອງໄດ້ຂົນສົ່ງໄປເສັ້ນທາງອື່ນ ຜູ້ຂົນສົ່ງ ຕ້ອງແຈ້ງໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ຂອງເມືອງຕົ້ນທາງ ຮັບຮູ້ໂດຍດ່ວນ ເພື່ອປະສານຫາ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຫຼື ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ທາງຜ່ານ ແລະ ປາຍທາງຊາບ;

4. ຮັບປະກັນ ບໍ່ໃຫ້ມີສິ່ງເສດເຫຼືອຈາກຍານພາຫະນະຂົນສົ່ງ ຮົ່ວໄຫຼ ຫຼື ຕົກເຮ່ຍໃສ່ເສັ້ນທາງ ແລະ ດຳເນີນການກຳຈັດສິ່ງເສດເຫຼືອ ຕາມຫຼັກວິຊາການ;

5. ຮັບປະກັນບໍ່ເອົາຜະລິດຕະພັນ ສັດ, ສັດນ້ຳ ອອກຈາກຍານພາຫະນະຢ່າງເດັດຂາດ, ໃນກໍລະນີສຸກເສີນທີ່ມີຄວາມຈຳເປັນຕ້ອງໄດ້ເອົາຜະລິດຕະພັນ ສັດ ຫຼື ສັດນ້ຳ ລົງຈາກຍານພາຫະນະ ຫຼື ຄ່ຽນຖ່າຍ ຕ້ອງແຈ້ງຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ຂອງເມືອງທີ່ເກີດເຫດສຸກເສີນຊາບ ເພື່ອມາດຳເນີນການກວດກາຕິດຕາມ ຢ່າງໃກ້ຊິດ;

6. ມີເອກະສານ ທີ່ຖືກຕ້ອງ ແລະ ຄົບຖ້ວນ ໄປຕະຫຼອດການຂົນສົ່ງ ແລະ ໃຫ້ຄວາມຮ່ວມມືໃນກໍລະນີທີ່ມີການກວດກາຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

7. ອະນາໄມຂ້າເຊື້ອຍານພາຫະນະ, ຖັງ ຫຼື ອຸປະກອນສໍາລັບການຂົນສົ່ງທັງກ່ອນ ແລະ ຫຼັງການຂົນສົ່ງທຸກຄັ້ງ. ການນໍາໃຊ້ຢາ ຫຼື ສານເຄມີເຂົ້າໃນການປ້ອງກັນ ແລະ ຂ້າເຊື້ອພະຍາດ ຕ້ອງນໍາໃຊ້ຊະນິດທີ່ເໝາະສົມ ແລະ ປອດໄພຕໍ່ ຜູ້ໃຊ້, ຍານພາຫະນະ ແລະ ຕ້ອງປະຕິບັດຕາມຄໍາແນະນໍາຂອງຜູ້ຜະລິດ;

8. ຍານພາຫະນະຂົນສົ່ງຜະລິດຕະພັນ ສັດ ແລະ ສັດນໍ້າ ທີ່ມີລະບົບຄວາມເຢັນ ຕ້ອງຄວບຄຸມອຸນຫະພູມ ບໍ່ໃຫ້ເກີນ ສີ່ ອົງສາເຊ.

**ມາດຕາ 23 ການກວດກາຫຼັງການເຄື່ອນຍ້າຍຜະລິດຕະພັນ ສັດ ແລະ ສັດນໍ້າ**

ເມື່ອຜະລິດຕະພັນ ສັດ ຫຼື ສັດນໍ້າ ຖືກເຄື່ອນຍ້າຍເຖິງປາຍທາງແລ້ວ ຜູ້ເຄື່ອນຍ້າຍ ຜະລິດຕະພັນ ສັດ ຫຼື ສັດນໍ້າ ຕ້ອງແຈ້ງໃຫ້ຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ ຂອງເມືອງປາຍທາງ ເພື່ອກວດກາ ແລະ ເກັບໃບອະນຸຍາດເຄື່ອນຍ້າຍຄືນ ພາຍຫຼັງສໍາເລັດການເຄື່ອນຍ້າຍ.

ໃນກໍລະນີ ທີ່ພົບເຫັນຜະລິດຕະພັນ ສັດ ຫຼື ສັດນໍ້າ ມີສິ່ງເຈືອປົນ, ຜິດປົກກະຕິ ຕ້ອງດໍາເນີນມາດຕະການບໍາບັດ ຫຼື ທໍາລາຍຕາມຫຼັກວິຊາການ ພ້ອມທັງເຮັດບົດບັນທຶກໄວ້.

**ມາດຕາ 24 ການໂຈະການເຄື່ອນຍ້າຍຜະລິດຕະພັນ ຫຼື ການປ່ຽນເສັ້ນທາງເຄື່ອນຍ້າຍ**

ການເຄື່ອນຍ້າຍຜະລິດຕະພັນ ສັດ ຫຼື ສັດນໍ້າ ຈະຖືກ ໂຈະ ຫຼື ປ່ຽນເສັ້ນທາງ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການລາຍງານການເກີດການລະບາດຂອງພະຍາດ ສັດ ຫຼື ສັດນໍ້າ ຢູ່ຕົ້ນທາງ ຫຼື ປາຍທາງກ່ອນການເຄື່ອນຍ້າຍ;

2. ສົງໄສວ່າ ມີການຕິດເຊື້ອພະຍາດສັດ ຫຼື ສິ່ງເຈືອປົນທີ່ເປັນອັນຕະລາຍ ໃນເວລາກວດກາຢູ່ດ່ານກວດກາສັດຕະວະແພດ;

3. ປ່ຽນເສັ້ນທາງການເຄື່ອນຍ້າຍໄດ້ ໃນກໍລະນີເກີດການລະບາດພະຍາດສັດ ຕາມເສັ້ນທາງຂອງການເຄື່ອນຍ້າຍ ຕາມການຕົກລົງຂອງເຈົ້າໜ້າທີ່ສັດຕະວະແພດ.

ສໍາລັບຄ່າໃຊ້ຈ່າຍ ກ່ຽວກັບການໂຈະ ຫຼື ການປ່ຽນເສັ້ນທາງເຄື່ອນຍ້າຍ ເຈົ້າຂອງຜະລິດຕະພັນ ສັດ ຫຼື ສັດນໍ້າ ເປັນຜູ້ຮັບຜິດຊອບທັງໝົດ.

**ມາດຕາ 25 ການຍົກເລີກການເຄື່ອນຍ້າຍຜະລິດຕະພັນ ສັດ ຫຼື ສັດນໍ້າ**

ການເຄື່ອນຍ້າຍຜະລິດຕະພັນ ສັດ ຫຼື ສັດນໍ້າ ຈະຖືກຍົກເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການຢັ້ງຢືນ ຫຼື ປະກາດ ເປັນເຂດລະບາດພະຍາດ ສັດ, ສັດນໍ້າ ທີ່ຈໍາເປັນຕ້ອງແຈ້ງ ຢູ່ຕົ້ນທາງ ຫຼື ປາຍທາງ;

2. ມີການຢັ້ງຢືນວ່າຜະລິດຕະພັນ ສັດ ຫຼື ສັດນໍ້າ ຕິດເຊື້ອພະຍາດສັດ, ສັດນໍ້າ ທີ່ຈໍາເປັນຕ້ອງແຈ້ງ ໃນເວລາກວດກາຢູ່ດ່ານກວດກາສັດຕະວະແພດ ແລ້ວໃຫ້ດໍາເນີນການທໍາລາຍ ຕາມລະບຽບການ;

3. ບໍ່ປະຕິບັດຕາມໃບອະນຸຍາດເຄື່ອນຍ້າຍຜະລິດຕະພັນ ສັດ ຫຼື ສັດນໍ້າ.

ສໍາລັບຄ່າໃຊ້ຈ່າຍ ກ່ຽວກັບການຍົກເລີກການເຄື່ອນຍ້າຍ ຫຼື ທໍາລາຍ ເຈົ້າຂອງຜະລິດຕະພັນ ສັດ ຫຼື ສັດນໍ້າ ເປັນຜູ້ຮັບຜິດຊອບທັງໝົດ.

## ພາກທີ III
## ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ

### ໝວດທີ 1
### ແຜນການນຳເຂົ້າ ແລະ ສົ່ງອອກ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ

**ມາດຕາ 26 ແຜນການ ນຳເຂົ້າ ແລະ ສົ່ງອອກ ສັດ, ສັດນ້ຳ ຜະລິດຕະພັນ ສັດ ແລະ ສັດນ້ຳ**

ຜູ້ທີ່ມີຈຸດປະສົງ ນຳເຂົ້າ ແລະ ສົ່ງອອກ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຕ້ອງສະເໜີ ແຜນການນຳເຂົ້າ ຫຼື ສົ່ງອອກ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ປະຈຳປີ ຂອງຕົນ ຕໍ່ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ເພື່ອພິຈາລະນາ ກ່ອນວັນທີ 31 ຕຸລາ ຂອງແຕ່ລະປີ.

ໃນກໍລະນີທີ່ບໍ່ສາມາດພິຈາລະນາໄດ້ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຕ້ອງແຈ້ງເຫດຜົນໃຫ້ຜູ້ສະເໜີ ຢ່າງເປັນລາຍລັກອັກສອນ.

**ມາດຕາ 27 ເອກະສານປະກອບ ໃນການສະເໜີແຜນການ ນຳເຂົ້າ ຫຼື ສົ່ງອອກ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ**

ເອກະສານປະກອບໃນການສະເໜີແຜນການ ນຳເຂົ້າ ຫຼື ສົ່ງອອກ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ມີດັ່ງນີ້:

1. ໃບຄຳຮ້ອງ ຕາມແບບພິມ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ;
2. ສຳເນົາໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດກ່ຽວກັບການລ້ຽງສັດ, ສັດນ້ຳ ແລະ ການປະມົງ;
3. ແຜນການນຳເຂົ້າ ຫຼື ສົ່ງອອກ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຕາມແບບພິມ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ;
4. ບົດສະຫຼຸບການຈັດຕັ້ງປະຕິບັດຜ່ານມາ ຕາມແບບພິມ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ ສຳລັບຜູ້ທີ່ໄດ້ຮັບຮອງແຜນການຜ່ານມາ.

**ມາດຕາ 28 ການພິຈາລະນາແຜນການ ນຳເຂົ້າ ຫຼື ສົ່ງອອກ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ**

ພາຍຫຼັງໄດ້ຮັບ ສຳນວນເອກະສານ ຄົບຖ້ວນ ແລະ ຖືກຕ້ອງແລ້ວ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຕ້ອງປະສານສົມທົບກັບພະແນກການຂັ້ນແຂວງ ສົງລວມ ແລະ ຄົ້ນຄວ້າ ແຜນການນຳເຂົ້າ ຫຼື ສົ່ງອອກ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ເພື່ອສະເໜີກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາ ກ່ອນວັນທີ 30 ພະຈິກ ຂອງແຕ່ລະປີ.

ກະຊວງກະສິກຳ ແລະ ປ່າໄມ້ ປະສານສົມທົບກັບບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຄົ້ນຄວ້າ ແລະ ພິຈາລະນາຮັບຮອງແຜນການນຳເຂົ້າ ຫຼື ສົ່ງອອກ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບເອກະສານ ເປັນຕົ້ນໄປ.

### ໝວດທີ 2
### ການນຳເຂົ້າ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ

**ມາດຕາ 29 ການນຳເຂົ້າ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ**

ການນຳເຂົ້າສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ມີ ດັ່ງນີ້:

1. ການນຳເຂົ້າ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ທົ່ວໄປ;
2. ການນຳເຂົ້າ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ເພື່ອການສົ່ງອອກ.

**ມາດຕາ 30 ການນຳເຂົ້າ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ທົ່ວໄປ**

ການນຳເຂົ້າ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ທົ່ວໄປ ແມ່ນ ການນຳເອົາສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ເຂົ້າມາໃນ ສປປ ລາວ ເພື່ອນຳມາລ້ຽງ, ຄົ້ນຄວ້າ ວິໄຈ, ປຸງແຕ່ງ ແລະ ຈຳໜ່າຍ.

ຜູ້ນຳເຂົ້າສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ທົ່ວໄປ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນບຸກຄົນ, ນິຕິບຸກຄົນ ທີ່ມີທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດກ່ຽວກັບການລ້ຽງສັດ, ສັດນ້ຳ ແລະ ການປະມົງ ຫຼື ການຈັດຕັ້ງ ທີ່ຖືກສ້າງຕັ້ງຢ່າງຖືກຕ້ອງຕາມກົດໝາຍ;
2. ມີສະຖານທີ່ລ້ຽງສັດ ຫຼື ລະບົບສາງເກັບຮັກສາຜະລິດຕະພັນ ສັດ ຫຼື ສັດນ້ຳ ຕາມມາດຕະຖານ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ;
3. ມີສັນຍາ ຫຼື ຂໍ້ຜູກພັນກັບຄູ່ຄ້າຂອງປະເທດສົ່ງອອກ;
4. ໃບອະນຸຍາດສົ່ງອອກ ຈາກປະເທດຕົ້ນທາງ;
5. ປະຕິບັດຕາມເງື່ອນໄຂອື່ນ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ.

**ມາດຕາ 31 ການນຳເຂົ້າສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ເພື່ອການສົ່ງອອກ**

ການນຳເຂົ້າສັດ ແລະ ສັດນ້ຳ ເພື່ອການສົ່ງອອກ ແມ່ນ ການນຳເອົາສັດເຂົ້າມາລ້ຽງຢູ່ໃນສະຖານທີ່ກັກກັນສັດ ຫຼື ສູນຟື້ນຟູສຸຂະພາບສັດນ້ຳ ເພື່ອການສົ່ງອອກໄປຈຳໜ່າຍຢູ່ຕ່າງປະເທດ ພາຍໃນໄລຍະເວລາ ບໍ່ເກີນ ຊາວເອັດວັນ ຫຼື ຕາມການກຳນົດຂອງປະເທດນຳເຂົ້າ.

ການນຳເຂົ້າ ຜະລິດຕະພັນ ສັດ ແລະ ສັດນ້ຳ ເພື່ອການສົ່ງອອກ ແມ່ນ ການນຳເອົາ ຜະລິດຕະພັນ ດັ່ງກ່າວມາພັກຊົ່ວຄາວ ໂດຍມີການປຸງແຕ່ງ, ຫຸ້ມຫໍ່ໃໝ່, ການແຍກຫີບຫໍ່, ຕິດສະຫຼາກ ຫຼື ຕິດກາໝາຍໃໝ່ ແລ້ວສົ່ງອອກຄືນປະເທດຕົ້ນທາງ ຫຼື ປະເທດທີສາມ.

ຜູ້ນຳເຂົ້າສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ເພື່ອການສົ່ງອອກ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນບຸກຄົນ ຫຼື ນິຕິບຸກຄົນ ທີ່ມີທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດກ່ຽວກັບການລ້ຽງສັດ, ສັດນ້ຳ ແລະ ການປະມົງ;
2. ມີສະຖານທີ່ກັກກັນສັດ ເພື່ອການສົ່ງອອກ, ສາງ ຫຼື ໂຮງງານປຸງແຕ່ງຜະລິດຕະພັນ ສັດ ຫຼື ສັດນ້ຳເພື່ອການສົ່ງອອກໄດ້ຕາມມາດຕະຖານ ທີ່ກະຊວງກະສິກຳ ແລະ ປ່າໄມ້ ຫຼື ປະເທດນຳເຂົ້າ ກຳນົດ;
3. ມີສັນຍາ ຫຼື ຂໍ້ຜູກພັນກັບຄູ່ຄ້າຂອງປະເທດນຳເຂົ້າ;
4. ໃບອະນຸຍາດສົ່ງອອກ ຈາກປະເທດຕົ້ນທາງ;
5. ປະຕິບັດຕາມເງື່ອນໄຂ ຂອງປະເທດນຳເຂົ້າ.

**ມາດຕາ 32 ການຂໍອະນຸຍາດນຳເຂົ້າ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ**

ຜູ້ທີ່ມີຈຸດປະສົງ ນຳເຂົ້າ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຕ້ອງປະກອບເອກະສານ ຂໍອະນຸຍາດຕາມທີ່ກຳນົດໄວ້ ໃນແບບພິມຂອງກະຊວງກະສິກຳ ແລະ ປ່າໄມ້ ຍື່ນຕໍ່ກະຊວງກະສິກຳ ແລະ ປ່າໄມ້.

ພາຍຫຼັງໄດ້ຮັບເອກະສານປະກອບແລ້ວ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ດຳເນີນ ການກວດກາເອກະສານ, ການປະເມີນຄວາມສ່ຽງ ແລະ ພິຈາລະນາ ອອກໃບອະນຸຍາດ ນຳເຂົ້າສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳພາຍໃນ ຫ້າວັນ ລັດຖະການ. ໃນກໍລະນີທີ່ບໍ່ສາມາດອອກໃບອະນຸຍາດນຳເຂົ້າ ຕ້ອງແຈ້ງຕອບຜູ້ຮ້ອງຂໍ ຢ່າງເປັນລາຍລັກອັກສອນ.

ໃບອະນຸຍາດນຳເຂົ້າສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ມີອາຍຸການນຳໃຊ້ ເກົ້າສິບວັນ. ໃນກໍລະນີທີ່ບໍ່ສາມາດນຳເຂົ້າສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ໄດ້ພາຍໃນກຳນົດເວລາດັ່ງກ່າວ ໃບອະນຸຍາດນຳເຂົ້າ ບໍ່ສາມາດນຳໃຊ້ໄດ້.

**ມາດຕາ 33 ການແຈ້ງສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ກ່ອນການນຳເຂົ້າ**

ຜູ້ນຳເຂົ້າ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຕ້ອງແຈ້ງເອກະສານ, ລາຍການ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຕໍ່ເຈົ້າໜ້າທີ່ສັດຕະວະແພດ ປະຈຳດ່ານກວດກາສັດຕະວະແພດ ບ່ອນນຳເຂົ້າ ຢ່າງໜ້ອຍ ສາມວັນ ກ່ອນວັນນຳເຂົ້າ.

**ມາດຕາ 34 ການກວດກາສັດຕະວະແພດຢູ່ດ່ານໃນເວລານຳເຂົ້າ**

ການກວດກາສັດຕະວະແພດຢູ່ດ່ານ ໃນເວລານຳເຂົ້າ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ນຳເຂົ້າ ຕ້ອງແຈ້ງເຈົ້າໜ້າທີ່ສັດຕະວະແພດ ປະຈຳດ່ານ ທັນທີໃນເວລາສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ມາເຖິງດ່ານ;

2. ເຈົ້າໜ້າທີ່ສັດຕະວະແພດ ປະຈຳດ່ານ ບັນທຶກຂໍ້ມູນກ່ຽວກັບ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ເຂົ້າໃນຖານຂໍ້ມູນ, ດຳເນີນການກວດກາ ແລະ ອອກໃບຢັ້ງຢືນການກວດກາ ເພື່ອປ່ອຍ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຜ່ານດ່ານ;

3. ໃນກໍລະນີສົງໄສ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຕິດພະຍາດສັດ, ສັດນ້ຳທີ່ຈຳເປັນຕ້ອງແຈ້ງ ຫຼື ເຈືອປົນສິ່ງທີ່ເປັນອັນຕະລາຍ ໃຫ້ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ແຈ້ງໃຫ້ຜູ້ນຳເຂົ້າ ເພື່ອເອົາສັດ, ສັດນ້ຳ ໄປກັກກັນຢູ່ສະຖານທີ່ກັກກັນ ຫຼື ເອົາຜະລິດຕະພັນ ສັດ ແລະ ສັດນ້ຳ ໄປບຳບັດ ຫຼື ທຳລາຍ ພ້ອມທັງປະຕິບັດມາດຕະການດ້ານວິຊາການອື່ນ ທີ່ຈຳເປັນ ແລ້ວໃຫ້ລາຍງານ ຕໍ່ ຫົວໜ້າດ່ານ, ອົງການຄຸ້ມຄອງ ແລະ ກວດກາ ວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ແລະ ດ່ານກວດກາສັດຕະວະແພດ ທີ່ປ່ອຍສິນຄ້າດັ່ງກ່າວຂອງປະເທດສົ່ງອອກ.

**ມາດຕາ 35 ການຕິດຕາມກວດກາຫຼັງການນຳເຂົ້າ**

ການຕິດຕາມກວດກາຫຼັງການນຳເຂົ້າ ໃຫ້ດຳເນີນໃນກໍລະນີ ພົບອາການສົງໄສວ່າ ສັດ, ສັດນ້ຳ ຕິດພະຍາດສັດ, ສັດນ້ຳ ທີ່ຈຳເປັນຕ້ອງແຈ້ງ ຫຼື ຜະລິດຕະພັນສັດ ແລະ ສັດນ້ຳ ມີສິ່ງເຈືອປົນທີ່ເປັນອັນຕະລາຍ ໃຫ້ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ແຈ້ງຕໍ່ເຈົ້າໜ້າທີ່ສັດຕະວະແພດປາຍທາງ ເພື່ອຕິດຕາມ ແລະ ເກັບຕົວຢ່າງນຳໄປວິໄຈ. ໃນກໍລະນີຢັ້ງຢືນ ສັດ, ສັດນ້ຳ ຕິດເຊື້ອພະຍາດສັດ, ສັດນ້ຳ ທີ່ຈຳເປັນຕ້ອງແຈ້ງ ຫຼື ຜະລິດຕະພັນ ສັດ ແລະ ສັດນ້ຳ ເຈືອປົນສິ່ງທີ່ເປັນອັນຕະລາຍ ໃຫ້ລາຍງານອົງການຄຸ້ມຄອງ ແລະ ກວດກາ ວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ໂດຍດ່ວນ ພ້ອມທັງດຳເນີນມາດຕະການຄວບຄຸມ ຕາມລະບຽບການ.

## ໝວດທີ 3
## ການສົ່ງອອກ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ

**ມາດຕາ 36 ການຂໍອະນຸຍາດສົ່ງອອກ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ສົ່ງອອກ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ລວມທັງການສົ່ງອອກຄືນ ຕ້ອງປະກອບເອກະສານ ຂໍອະນຸຍາດ ຕາມທີ່ກຳນົດໄວ້ ໃນແບບພິມຂອງກະຊວງກະສິກຳ ແລະ ປ່າໄມ້ ຍື່ນຕໍ່ກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາ.

ພາຍຫຼັງໄດ້ຮັບເອກະສານປະກອບແລ້ວ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ດຳເນີນ ການກວດກາເອກະສານ, ການປະເມີນຄວາມສ່ຽງ ແລະ ພິຈາລະນາ ອອກໃບອະນຸຍາດສົ່ງອອກ ພາຍໃນເວລາ ຫ້າວັນ ລັດຖະການ. ໃນກໍລະນີທີ່ບໍ່ສາມາດອອກໃບອະນຸຍາດສົ່ງອອກ ຕ້ອງແຈ້ງຕອບຜູ້ຮ້ອງຂໍ ຢ່າງເປັນລາຍລັກອັກສອນ.

ໃບອະນຸຍາດສົ່ງອອກສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ມີອາຍຸການນຳໃຊ້ ເກົ້າສິບວັນ. ໃນກໍລະນີທີ່ບໍ່ສາມາດສົ່ງອອກສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ໄດ້ພາຍໃນກຳນົດເວລາດັ່ງກ່າວ ໃບອະນຸຍາດສົ່ງອອກ ບໍ່ສາມາດນຳໃຊ້ໄດ້.

**ມາດຕາ 37 ການແຈ້ງສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ກ່ອນການສົ່ງອອກ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສົ່ງອອກ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຕ້ອງແຈ້ງເອກະສານ, ລາຍການ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຕໍ່ເຈົ້າໜ້າທີ່ສັດຕະວະແພດ ປະຈຳດ່ານ ທີ່ຈະສົ່ງອອກ ຢ່າງໜ້ອຍ ສາມວັນ ກ່ອນວັນສົ່ງອອກ.

**ມາດຕາ 38 ການກວດກາສັດຕະວະແພດຢູ່ດ່ານໃນເວລາສົ່ງອອກ**

ການກວດກາສັດຕະວະແພດຢູ່ດ່ານ ໃນເວລາສົ່ງອອກ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ສົ່ງອອກ ຕ້ອງແຈ້ງເຈົ້າໜ້າທີ່ສັດຕະວະແພດ ປະຈຳດ່ານ ທັນທີໃນເວລາສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ມາເຖິງດ່ານ;
2. ເຈົ້າໜ້າທີ່ສັດຕະວະແພດ ປະຈຳດ່ານ ບັນທຶກຂໍ້ມູນກ່ຽວກັບ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ເຂົ້າໃນຖານຂໍ້ມູນ, ດຳເນີນການກວດກາ ແລະ ອອກໃບຢັ້ງຢືນການກວດກາ ເພື່ອປ່ອຍ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຜ່ານດ່ານ;
3. ໃນກໍລະນີສົງໄສ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຕິດພະຍາດສັດ, ສັດນ້ຳທີ່ຈຳເປັນຕ້ອງແຈ້ງ ຫຼື ເຈືອປົນສິ່ງທີ່ເປັນອັນຕະລາຍ ໃຫ້ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ແຈ້ງໃຫ້ຜູ້ສົ່ງອອກ ເພື່ອເອົາສັດ, ສັດນ້ຳ ໄປກັກກັນຢູ່ສະຖານທີ່ກັກກັນ ຫຼື ເອົາຜະລິດຕະພັນ ສັດ ແລະ ສັດນ້ຳ ໄປບຳບັດ ຫຼື ທຳລາຍ ພ້ອມທັງປະຕິບັດມາດຕະການດ້ານວິຊາການອື່ນ ທີ່ຈຳເປັນ ແລ້ວໃຫ້ລາຍງານ ຕໍ່ ອົງການຄຸ້ມຄອງ ແລະ ກວດກາ ວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ.

**ມາດຕາ 39 ການປະຕິເສດການສົ່ງອອກ**

ການສົ່ງອອກສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຈະຖືກປະຕິເສດ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ພົບເອກະສານມີການປອມແປງ ຫຼື ບໍ່ຖືກຕ້ອງ;
2. ພົບສັດ, ສັດນ້ຳ ຕິດເຊື້ອພະຍາດສັດ, ສັດນ້ຳ ທີ່ຈຳເປັນຕ້ອງແຈ້ງ ຫຼື ຜະລິດຕະພັນ ສັດ ແລະ ສັດນ້ຳ ເຈືອປົນສິ່ງທີ່ເປັນອັນຕະລາຍ;
3. ພົບວ່າມີການຂົນສົ່ງສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຜ່ານເຂດລະບາດພະຍາດສັດ ຫຼື ເຂດຄວບຄຸມພະຍາດລະບາດສັດ;
4. ບໍ່ປະຕິບັດຕາມເງື່ອນໄຂ ຂອງປະເທດນຳເຂົ້າ.

## ໝວດທີ 4
## ການສົ່ງຜ່ານສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ

**ມາດຕາ 40 ການຂໍອະນຸຍາດສົ່ງຜ່ານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຕ້ອງປະກອບເອກະສານ ຂໍອະນຸຍາດ ຕາມທີ່ກຳນົດໄວ້ ໃນແບບພິມຂອງກະຊວງກະສິກຳ ແລະ ປ່າໄມ້ ຍື່ນຕໍ່ກະຊວງກະສິກຳ ແລະ ປ່າໄມ້ ຢ່າງໜ້ອຍ ສິບຫ້າວັນ ກ່ອນສິນຄ້າມາເຖິງດ່ານຂາເຂົ້າ.

ພາຍຫຼັງໄດ້ຮັບເອກະສານປະກອບແລ້ວ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ດຳເນີນ ການກວດກາເອກະສານ, ການປະເມີນຄວາມສ່ຽງ ແລະ ພິຈາລະນາ ອອກໃບອະນຸຍາດສົ່ງຜ່ານ ພາຍໃນເວລາ ຫ້າວັນ ລັດຖະການ. ໃນກໍລະນີ ທີ່ບໍ່ສາມາດອອກໃບອະນຸຍາດສົ່ງຜ່ານ ຕ້ອງແຈ້ງຕອບຜູ້ຮ້ອງຂໍ ຢ່າງເປັນລາຍລັກອັກສອນ.

ໃບອະນຸຍາດສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ມີອາຍຸການນຳໃຊ້ ສິບວັນ. ໃນກໍລະນີ ທີ່ບໍ່ສາມາດສົ່ງອອກສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ໄດ້ພາຍໃນກຳນົດເວລາດັ່ງກ່າວ ໃບອະນຸຍາດ ສົ່ງຜ່ານ ບໍ່ສາມາດນຳໃຊ້ໄດ້.

**ມາດຕາ 41 ການແຈ້ງສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ກ່ອນການສົ່ງຜ່ານ**

ຜູ້ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຕ້ອງແຈ້ງເອກະສານ, ລາຍການ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຕໍ່ເຈົ້າໜ້າທີ່ສັດຕະວະແພດ ປະຈຳດ່ານກວດກາສັດຕະວະແພດ ບ່ອນຂາເຂົ້າ ຢ່າງ ໜ້ອຍ ສາມວັນ ກ່ອນວັນນຳເຂົ້າ.

**ມາດຕາ 42 ການກວດກາສັດຕະວະແພດຢູ່ດ່ານສຳລັບການສົ່ງຜ່ານ**

ການກວດກາສັດຕະວະແພດຢູ່ດ່ານ ສຳລັບການສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ໃນ ເວລາຮອດດ່ານຂາເຂົ້າ ໃຫ້ປະຕິບັດ ຄືກັນກັບ ຂັ້ນຕອນການກວດກາສັດຕະວະແພດຢູ່ດ່ານ ໃນເວລານຳເຂົ້າ ຕາມ ທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງດຳລັດສະບັບນີ້.

ການກວດກາສັດຕະວະແພດຢູ່ດ່ານ ສຳລັບການສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ໃນ ເວລາຮອດດ່ານຂາອອກ ໃຫ້ປະຕິບັດ ຄືກັນກັບ ຂັ້ນຕອນການກວດກາສັດຕະວະແພດຢູ່ດ່ານ ໃນເວລາສົ່ງອອກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 38 ຂອງດຳລັດສະບັບນີ້.

**ມາດຕາ 43 ມາດຕະການຄວບຄຸມການສົ່ງຜ່ານ**

ການຂົນສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຜູ້ຂົນສົ່ງ ຕ້ອງປະຕິບັດມາດຕະການຄວບຄຸມ ດັ່ງນີ້:

1. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ສັດຕະວະແພດ ໃນການກວດກາ ຫຼື ໜີບກົ່ວ ໃສ່ຍານພາຫະນະ ຂົນສົ່ງ;
2. ຂົນສົ່ງໄປຕາມເສັ້ນທາງ ທີ່ກຳນົດໄວ້ໃນໃບອະນຸຍາດ, ໃນກໍລະນີທີ່ມີຄວາມຈຳເປັນ ຂົນສົ່ງໄປ ເສັ້ນທາງອື່ນ ຜູ້ຂົນສົ່ງ ຕ້ອງແຈ້ງໃຫ້ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ທີ່ເປັນທາງຜ່ານຊາບ;
3. ຮັບປະກັນ ບໍ່ໃຫ້ມີສິ່ງເສດເຫຼືອຈາກຍານພາຫະນະຂົນສົ່ງ ຮົ່ວໄຫຼ ຫຼື ຕົກເຮ່ຍໃສ່ເສັ້ນທາງ ແລະ ດຳ ເນີນການກຳຈັດສິ່ງເສດເຫຼືອ ຕາມຫຼັກວິຊາການ;
4. ຮັບປະກັນບໍ່ໃຫ້ເອົາ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ລົງຈາກຍານພາຫະນະຕະຫຼອດ ໄລຍະການຂົນສົ່ງ, ໃນກໍລະນີສຸກເສີນ ທີ່ມີຄວາມຈຳເປັນຕ້ອງໄດ້ເອົາສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ລົງຈາກຍານພາຫະນະ ຫຼື ຄ່ຽນຖ່າຍ ຕ້ອງແຈ້ງໃຫ້ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ທີ່ເກີດເຫດສຸກເສີນ ເພື່ອມາດຳເນີນການຕິດຕາມ ກວດກາ ຢ່າງໃກ້ຊິດ;
5. ແຈ້ງໃຫ້ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ທີ່ໃກ້ທີ່ສຸດ ໃນກໍລະນີ ສັດ, ສັດນ້ຳ ຫາກເສຍ ຊີວິດ ຫຼື ມີອາການຜິດປົກກະຕິ;
6. ມີເອກະສານ ທີ່ຖືກຕ້ອງ ແລະ ຄົບຖ້ວນ ໄປຕະຫຼອດການຂົນສົ່ງ ແລະ ໃຫ້ຄວາມຮ່ວມມືໃນກໍລະນີ ທີ່ມີການກວດກາຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ.

**ມາດຕາ 44 ການປະຕິເສດການສົ່ງຜ່ານ**

ການສົ່ງຜ່ານສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຈະຖືກປະຕິເສດ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ພົບເອກະສານມີການປອມແປງ ຫຼື ບໍ່ຖືກຕ້ອງ;

2. ພົບສັດ, ສັດນໍ້າ ຕິດເຊື້ອພະຍາດສັດ, ສັດນໍ້າ ທີ່ຈຳເປັນຕ້ອງແຈ້ງ ຫຼື ຜະລິດຕະພັນ ສັດ ແລະ ສັດນໍ້າ ເຈືອປົນສິ່ງທີ່ເປັນອັນຕະລາຍ;

3. ພົບວ່າມີການຂົນສົ່ງສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ ຜ່ານເຂດລະບາດພະຍາດສັດ ຫຼື ເຂດຄວບຄຸມພະຍາດລະບາດສັດ ຂອງປະເທດສົ່ງອອກ ຫຼື ປະເທດທາງຜ່ານ.

## ພາກທີ IV
## ສິດ ແລະ ພັນທະ ຂອງເຈົ້າຂອງ, ຜູ້ເຄື່ອນຍ້າຍ ແລະ ຜູ້ຂົນສົ່ງ

### ມາດຕາ 45 ສິດ ຂອງເຈົ້າຂອງ, ຜູ້ເຄື່ອນຍ້າຍ ແລະ ຜູ້ຂົນສົ່ງ

ເຈົ້າຂອງ, ຜູ້ເຄື່ອນຍ້າຍ ແລະ ຜູ້ຂົນສົ່ງ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ ມີສິດ ດັ່ງນີ້:

1. ດຳເນີນທຸລະກິດຂອງຕົນ ໃຫ້ຖືກຕ້ອງຕາມການອະນຸຍາດ, ຕາມມາດຕະຖານເຕັກນິກ ແລະ ກົດໝາຍ;

2. ໄດ້ຮັບຂໍ້ມູນ ຂ່າວສານ ແລະ ເຂົ້າຮ່ວມການຝຶກອົບຮົມກ່ຽວກັບ ການເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ;

3. ຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ກ່ຽວກັບການລະເມີດກົດໝາຍ ຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

4. ນຳໃຊ້ສິດອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 46 ພັນທະ ຂອງເຈົ້າຂອງ, ຜູ້ເຄື່ອນຍ້າຍ ແລະ ຜູ້ຂົນສົ່ງ

ເຈົ້າຂອງ, ຜູ້ເຄື່ອນຍ້າຍ ແລະ ຜູ້ຂົນສົ່ງ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ ມີພັນທະ ດັ່ງນີ້:

1. ແຈ້ງໃຫ້ອົງການຄຸ້ມຄອງ ແລະ ກວດກາ ວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ ທີ່ກ່ຽວຂ້ອງ ໃນເວລາພົບເຫັນ ຫຼື ສົງໄສວ່າ ສັດ, ສັດນໍ້າ ຕິດເຊື້ອພະຍາດສັດ, ສັດນໍ້າ ທີ່ຈຳເປັນຕ້ອງແຈ້ງ ຫຼື ຜະລິດຕະພັນ ສັດ ແລະ ສັດນໍ້າ ເຈືອປົນສິ່ງທີ່ເປັນອັນຕະລາຍ;

2. ປະຕິບັດຕາມຂັ້ນຕອນ ແລະ ມາດຕະການ ກ່ຽວກັບການເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ;

3. ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການ;

4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ພາກທີ V
## ຂໍ້ຫ້າມ

### ມາດຕາ 47 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ເຄື່ອນຍ້າຍ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ ເຂົ້າ ຫຼື ອອກຈາກ ເມືອງໜຶ່ງໄປເມືອງອື່ນ ພາຍໃນແຂວງ ຫຼື ແຂວງໜຶ່ງໄປແຂວງອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;

2. ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ ໂດຍບໍ່ໄດ້ຮັບອະນຸຍາດ;

3. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ ເພື່ອເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ;

4. ໃຊ້ຄວາມຮຸນແຮງ ຫຼື ນາບຂູ່ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ;

5. ປະຕິເສດການຮ່ວມມື ຫຼື ຂັດຂວາງ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ກວດກາ ວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ;

6. ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມ ການຈັດຕັ້ງ, ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ ໂດຍບໍ່ມີມູນຄວາມຈິງ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 48 ຂໍ້ຫ້າມ ສຳລັບເຈົ້າຂອງ, ຜູ້ເຄື່ອນຍ້າຍ ແລະ ຜູ້ຂົນສົ່ງ**

ຫ້າມ ເຈົ້າຂອງ, ຜູ້ເຄື່ອນຍ້າຍ ແລະ ຜູ້ຂົນສົ່ງ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ມີພຶດຕິກຳ ດັ່ງນີ້:

1. ເຄື່ອນຍ້າຍສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ໂດຍບໍ່ຖືກຕ້ອງຕາມໃບອະນຸຍາດ;

2. ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ບໍ່ຖືກຕ້ອງຕາມໃບ ອະນຸຍາດ;

3. ນຳໃຊ້ຍານພາຫະນະຂົນສົ່ງ ທີ່ບໍ່ໄດ້ຕາມມາດຕະຖານເຕັກນິກການຂົນສົ່ງ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ;

4. ເຄື່ອນຍ້າຍ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ທີ່ບໍ່ຖືກຕ້ອງຕາມຫຼັກສຸຂານາໄມ, ສົງໄສ ຫຼື ຕິດ ເຊື້ອພະຍາດສັດ, ສັດນ້ຳ ທີ່ຈຳເປັນຕ້ອງແຈ້ງ ຫຼື ມີສິ່ງເຈືອປົນທີ່ເປັນອັນຕະລາຍ;

5. ໃຫ້ສິນບົນ ຫຼື ຜົນປະໂຫຍດໃດໜຶ່ງ ແກ່ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ;

6. ປະຕິເສດການຮ່ວມມື ຫຼື ຂັດຂວາງ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 49 ຂໍ້ຫ້າມ ສຳລັບເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ**

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານເຄື່ອນຍ້າຍ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່ ແລະ ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ ແລະ ພັກພວກ ຂອງຕົນ;

2. ບັງຄັບ, ນາບຂູ່, ກົດໜ່ວງ, ຖ່ວງດຶງເອກະສານ, ຮຽກເອົາສິນບົນ ຫຼື ຜົນປະໂຫຍດອື່ນ;

3. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງ, ບໍ່ຖືກຕ້ອງ, ເມີນເສີຍ ແລະ ເລີນເລີ້ ຕໍ່ການປະຕິບັດ ໜ້າທີ່;

4. ດຳເນີນທຸລະກິດ ຫຼື ເປັນນາຍໜ້າ ກ່ຽວກັບການເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ;

5. ປອມແປງເອກະສານ, ລາຍເຊັນ ແລະ ຕາປະທັບ;

6. ເປີດເຜີຍຂໍ້ມູນຄວາມລັບທາງລັດຖະການ ໂດຍບໍ່ໄດ້ຮັບອະນຸຍາດ;

7. ທຳລາຍຫຼັກຖານ, ເອກະສານ ກ່ຽວກັບການເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ໂດຍບໍ່ຖືກຕ້ອງ;

8. ຮຽກເອົາ ຄ່າທຳນຽມ, ຄ່າບໍລິການ ແລະ ນຳໃຊ້ລາຍຮັບວິຊາການ ໂດຍບໍ່ຖືກຕ້ອງຕາມລະບຽບການ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## ພາກທີ VI
## ການຄຸ້ມຄອງ ແລະ ກວດກາ ວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ

**ມາດຕາ 50 ອົງການຄຸ້ມຄອງ ແລະ ກວດກາ ວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ**

ກະຊວງກະສິກຳ ແລະ ປ່າໄມ້ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ກວດກາ ວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້;
2. ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ;
3. ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ;
4. ດ່ານກວດກາສັດຕະວະແພດ.

**ມາດຕາ 51 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້**

ໃນການຄຸ້ມຄອງວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ກະຊວງກະສິກຳ ແລະ ປ່າໄມ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ມາເປັນ ແຜນການ, ແຜນງານ, ໂຄງການຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ;

4. ສ້າງລະບົບຖານຂໍ້ມູນກ່ຽວກັບ ການເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ;

5. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດນຳເຂົ້າ, ສົ່ງອອກ ແລະ ຂົນສົ່ງຜ່ານ, ໃບຢັ້ງຢືນສຸຂະພາບສັດ ແລະ ສັດນ້ຳ, ໃບຢັ້ງຢືນສຸຂານາໄມຜະລິດຕະພັນ ສັດ ແລະ ສັດນ້ຳ;

6. ຊີ້ນຳ, ຄຸ້ມຄອງ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ໃນຂອບເຂດທົ່ວປະເທດ;

7. ບຳລຸງ, ຍົກລະດັບ ແລະ ຄຸ້ມຄອງບຸກຄາກອນ ກ່ຽວກັບວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ;

8. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ;

9. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ;

10. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ກົດໝາຍ ແລະ ລະບຽບການ.

**ມາດຕາ 52 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ**

ໃນການຄຸ້ມຄອງວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນງານ, ແຜນການ ແລະ ໂຄງການ ກ່ຽວກັບວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ;

3. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດເຄື່ອນຍ້າຍສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ ລະຫວ່າງແຂວງຕໍ່ແຂວງ;

4. ຊີ້ນຳ, ຄຸ້ມຄອງ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ ໃນແຂວງຕົນ;

5. ສະເໜີໂຈະ ຫຼື ຖອນໃບອະນຸຍາດນຳເຂົ້າ, ສົ່ງອອກ ແລະ ຂົນສົ່ງຜ່ານ;

6. ໂຈະ ຫຼື ຖອນ ໃບຢັ້ງຢືນສຸຂະພາບສັດ, ສັດນໍ້າ, ໃບຢັ້ງຢືນສຸຂານາໄມຜະລິດຕະພັນສັດ ແລະ ສັດນໍ້າ, ໃບອະນຸຍາດເຄື່ອນຍ້າຍ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ ລະຫວ່າງເມືອງຕໍ່ເມືອງ ພາຍໃນແຂວງ, ນະຄອນຫຼວງ;

7. ບຳລຸງ, ຍົກລະດັບ ແລະ ຄຸ້ມຄອງບຸກຄາກອນ ກ່ຽວກັບວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ;

8. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ;

9. ປະສານສົມທົບກັບ ພະແນກການ, ອົງການປົກຄອງ ຂັ້ນເມືອງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ;

10. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ກ່ຽວກັບວຽກງານເຄື່ອນຍ້າຍ, ນໍາເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ ຕາມການມອບໝາຍ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານເຄື່ອນຍ້າຍ, ນໍາເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ ຕໍ່ກະຊວງກະສິກໍາ ແລະ ປ່າໄມ້ ແລະ ອົງການປົກຄອງ ຂັ້ນແຂວງ ຢ່າງເປັນປົກກະຕິ;

12. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ກົດໝາຍ ແລະ ລະບຽບການ.

**ມາດຕາ 53 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ**

ໃນການຄຸ້ມຄອງວຽກງານເຄື່ອນຍ້າຍ, ນໍາເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ ຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານເຄື່ອນຍ້າຍ, ນໍາເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ;

2. ໂຄສະນາ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານເຄື່ອນຍ້າຍ, ນໍາເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ;

3. ອອກໃບຢັ້ງຢືນສຸຂະພາບ ສັດ ແລະ ສັດນໍ້າ, ໃບຢັ້ງຢືນສຸຂານາໄມ ຜະລິດຕະພັນ ສັດ ແລະ ສັດນໍ້າ;

4. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດເຄື່ອນຍ້າຍ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ ລະຫວ່າງເມືອງຕໍ່ເມືອງ ພາຍໃນ ແຂວງ, ນະຄອນຫຼວງ;

5. ຄຸ້ມຄອງ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານເຄື່ອນຍ້າຍ, ນໍາເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ ໃນເມືອງຕົນ;

6. ສະເໜີສ້າງ, ບໍາລຸງ, ຍົກລະດັບບຸກຄະລາກອນ ກ່ຽວກັບວຽກງານເຄື່ອນຍ້າຍ, ນໍາເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ;

7. ຮັບ ແລະ ພິຈາລະນາແກ້ໄຂຄໍາສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານເຄື່ອນຍ້າຍ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ;

8. ປະສານສົມທົບກັບຫ້ອງການ, ອົງການປົກຄອງບ້ານ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານເຄື່ອນຍ້າຍ, ນໍາເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ;

9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານເຄື່ອນຍ້າຍ, ນໍາເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ ຕໍ່ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ແລະ ອົງການປົກຄອງ ຂັ້ນເມືອງ ຢ່າງເປັນປົກກະຕິ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ກົດໝາຍ ແລະ ລະບຽບການ.

**ມາດຕາ 54 ສິດ ແລະ ໜ້າທີ່ ຂອງດ່ານກວດກາສັດຕະວະແພດ**

ໃນການຄຸ້ມຄອງວຽກງານ ເຄື່ອນຍ້າຍ, ນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ ດ່ານກວດກາສັດຕະວະແພດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບການເຄື່ອນຍ້າຍ, ນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ;

2. ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການເຄື່ອນຍ້າຍ, ນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ, ສັດນໍ້າ, ຜະລິດຕະພັນ ສັດ ແລະ ສັດນໍ້າ;

3. ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຕາມກົດໝາຍ ແລະ ລະບຽບການ;

4. ກວດກາ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຢູ່ດ່ານກວດກາສັດຕະວະແພດ ແລະ ຢັ້ງຢືນການກວດກາ;

5. ນຳໃຊ້ມາດຕະການ ສຸຂານາໄມສັດ ເປັນຕົ້ນ ກັກ, ແຍກປ່ຽວ, ສົ່ງຕົວຢ່າງໄປວິໄຈ, ບຳບັດ, ປະຕິເສດການນຳເຂົ້າ, ສົ່ງກັບຄືນ, ທຳລາຍສັດ, ສັດນ້ຳ, ທີ່ຕິດເຊື້ອພະຍາດສັດ, ສັດນ້ຳ ທີ່ຈຳເປັນຕ້ອງແຈ້ງ ຫຼື ຜະລິດຕະພັນສັດ ແລະ ສັດນ້ຳ ທີ່ເຈືອປົນສິ່ງທີ່ເປັນອັນຕະລາຍ;

6. ເກັບກຳ ຂໍ້ມູນເບື້ອງຕົ້ນ ກ່ຽວກັບການກະທຳຜິດ ແລະ ລາຍງານໃຫ້ການຈັດຕັ້ງ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ເພື່ອແກ້ໄຂຕາມກົດໝາຍ ແລະ ລະບຽບການ;

7. ເກັບ ຄ່າທຳນຽມ ແລະ ຄ່າບໍລິການດ້ານວິຊາການ ຕາມລະບຽບການ;

8. ປະສານສົມທົບກັບ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ;

9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດ ວຽກງານຂອງຕົນຕໍ່ ອົງການຄຸ້ມຄອງ ແລະ ກວດກາ ວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ທີ່ຕົນຂຶ້ນກັບ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 55 ສິດ ແລະ ໜ້າທີ່ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ໃຫ້ການຮ່ວມມືກັບອົງການຄຸ້ມຄອງ ແລະ ກວດກາ ວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 56 ເນື້ອໃນການກວດກາ**

ການກວດກາ ວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ;

2. ການປະຕິບັດໜ້າທີ່ຂອງ ການຈັດຕັ້ງ, ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ;

3. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບການເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນ ສັດ ແລະ ສັດນ້ຳ;

4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 57 ຮູບການການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຊາບລ່ວງໜ້າ.

ໃນການດຳເນີນການກວດກາວຽກງານເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນສັດ ແລະ ສັດນ້ຳ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

**ມາດຕາ 58 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 59 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 60 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດດຳລັດ ສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 61 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 15 ມັງກອນ 2025 ເປັນຕົ້ນໄປ.

ດຳລັດສະບັບນີ້ປ່ຽນແທນ ດຳລັດວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ສະບັບເລກທີ 230/ລບ, ລົງວັນທີ 04 ມິຖຸນາ 2012.

ຕາງໜ້າ ລັດຖະບານແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ